**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງອຸດົມໄຊ

ພະແນກ ເຕັກໂນໂລຊີ ແລະ ການສື່ສານ

ເລກທີ 250/ພຕສ

ອຸດົມໄຊ, ວັນທີ 14 ພຶດສະພາ 2025

# ແຈ້ງການ

**ຮຽນ/ເຖິງ:** ບັນດາທ່ານຜູ້ນຳໃຊ້ບັນຊີສື່ສັງຄົມອອນລາຍ, ຂໍ້ມູນຂ່າວສານຜ່ານອິນເຕີເນັດ ຢູ່ພາຍໃນແຂວງອຸດົມໄຊ.

**ເລື່ອງ:** ເພີ່ມທະວີສະຕິລະວັງຕົວ ໃນການນຳໃຊ້ສື່ສັງຄົມອອນລາຍ, ຂໍ້ມູນຂ່າວສານຜ່ານອິນເຕີເນັດ.

- ອີງຕາມ ກົດໝາຍວ່າດ້ວຍການຕ້ານ ແລະສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ ເລກທີ 61/ສພຊ, ລົງວັນທີ 15 ກໍລະກົດ 2015;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງອຸດົມໄຊ, ສະບັບເລກທີ 776/ອຊ, ລົງວັນທີ 15 ສິງຫາ 2022;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການນຳໃຊ້, ສະກັດກັ້ນ ແລະ ແກ້ໄຂບັນຫາສື່ສັງຄົມອອນລາຍຢູ່ແຂວງອຸດົມໄຊ, ສະບັບເລກທີ 1009/ອຊ, ລົງວັນທີ 31 ສິງຫາ 2023.

ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ ຂໍແຈ້ງມາຍັງບັນດາທ່ານຊາບວ່າ: ປັດຈຸບັນ ມີການເຜີຍແຜ່ຂໍ້ມູນ ຂ່າວສານ ຜ່ານອິນເຕີເນັດ ຫຼື ສື່ສັງຄົມອອນລາຍ ທີ່ເປັນການຕົວະຍົວະ, ຫຼອກລວງ ຂອງກຸ່ມມິດສາຊີບ, ຂໍ້ມູນບິດເບືອນຄວາມຈິງ, ການໃສ່ຮ້າຍປ້າຍສີ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຊຶ່ງເຮັດໃຫ້ເກີດຄວາມເຂົ້າໃຈຜິດ, ສ້າງຄວາມແຕກແຍກ, ປັ່ນປ່ວນ, ແຕກຕື່ນ, ສົ່ງຜົນກະທົບ ຕໍ່ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ. ສະນັ້ນ, ເພື່ອເປັນການປ້ອງກັນ ແລະ ຕ້ານປະກົດການຫຍໍ້ທໍ້ດັ່ງກ່າວ ຈຶ່ງແຈ້ງເຕືອນມາຍັງ ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ກຳມະກອນ, ນັກຮຽນ-ນັກສຶກສາ, ຜູ້ປະກອບການ, ພໍ່ແມ່ປະຊາຊົນບັນດາເຜົ່າ ແລະ ຊາວຕ່າງປະເທດ ທີ່ດຳລົງຊີວິດຢູ່ພາຍໃນແຂວງອຸດົມໄຊ ຈົ່ງມີສະຕິລະວັງຕົວ ໃນການນຳໃຊ້ສື່ສັງຄົມອອນລາຍ, ການບໍລິໂພກ ຂໍ້ມູນ ຂ່າວສານ ຜ່ານອິນເຕີເນັດ ໂດຍສາມາດພິຈາລະນາປະຕິບັດຕາມຄຳແນະນຳ ດັ່ງລຸ່ມນີ້:

1. ຢ່າຫຼົງເຊື່ອການໂຄສະນາເກີນຈິງ ຫຼື ມີທີ່ມາບໍ່ໜ້າເຊື່ອຖື, ຖ້າມີການສະເໜີເງິນ ຫຼື ລາງວັນ ໂດຍບໍ່ຮູ້ຄວາມເປັນມາ ໃຫ້ຄິດໄວ້ກ່ອນສະເໝີວ່າ ແມ່ນການຫຼອກລວງ;
2. ຖ້າບໍ່ແນ່ໃຈຕໍ່ ຂໍ້ມູນຂ່າວສານ ທີ່ທ່ານໄດ້ຮັບ ໃຫ້ຕິດຕໍ່ຫາພາກສ່ວນທີ່ກ່ຽວຂ້ອງ ຜ່ານຊ່ອງທາງທາງການຂອງພາກສ່ວນນັ້ນ ເພື່ອຢືນຢັນຄວາມຖືກຕ້ອງ ເຊັ່ນ: ຜ່ານທາງເວັບໄຊ, ເບີໂທ, ອີເມວ ແລະ ອື່ນໆ;
3. ບໍ່ຄວນກົດລິ້ງໃດໆກໍ່ຕາມ ທີ່ມີແຫຼ່ງທີ່ມາບໍ່ຫນ້າເຊື່ອຖື, ທີ່ພົບເຫັນ ຫຼື ສົ່ງມາຕາມຊ່ອງທາງຕ່າງໆ ເຊັ່ນ: SMS, App, Website, E-mail ແລະ ອື່ນໆ;
4. ບໍ່ຄວນຕິດຕັ້ງ ແອັບພລິເຄຊັນ ທີ່ບໍ່ໜ້າເຊື່ອຖື ຊຶ່ງແອັບພລິເຄຊັນທີ່ຫນ້າເຊື່ອຖື ພື້ນຖານຄວນຈະແມ່ນແອັບທີ່ຢູ່ໃນຮ້ານຄ້າທາງການ ທີ່ຮັບປະກັນຄວາມປອດໄພ ເຊັ່ນ: App Store, Play Store ແລະ ອື່ນໆ ພ້ອມທັງອ່ານລາຍລະອຽດ ສິດທິການເຂົ້າເຖິງມືຖື ກ່ອນການຕິດຕັ້ງ ໂດຍບໍ່ຄວນເກີນຄວາມຈຳເປັນການໃຊ້ງານຂອງແອັບພລິເຄຊັນນັ້ນ;

5. ຕິດຕາມຂ່າວສານ ແລະ ສຶກສາຄວາມຮູ້ພື້ນຖານ ດ້ານຄວາມປອດໄພທາງໄຊເບີ ເປັນປະຈຳ ເພື່ອໃຫ້ຮູ້ທັນໄພຄຸກຄາມທາງໄຊເບີ;
6. ຖ້າຫາກທ່ານມີຂໍ້ສົງໄສ, ຕ້ອງການຄຳແນະນຳ ຫຼື ພົບເຫັນ ການເຜີຍແຜ່ຂໍ້ມູນ ຂ່າວສານ ທີ່ມີລັກສະນະໃສ່ຮ້າຍປ້າຍສີ, ໂຈມຕີແນວທາງ ຂອງພັກ-ລັດ, ການຕົວະຍົວະ ຫຼອກລວງ, ຊວນເຊື່ອ, ມົດສາຊີບ, ສ້າງຄວາມແຕກຕື່ນ, ຍຸຍົງປັ່ນປ່ວນ ແລະ ສ້າງຄວາມບໍ່ສະຫງົບໃນສັງຄົມ ສາມາດແຈ້ງມາຍັງ ກອງເລຂາ ຄະນະກຳມະການຄຸ້ມຄອງອິນເຕີເນັດ, ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ ຜ່ານຊ່ອງທາງ ດັ່ງລຸ່ມນີ້:
   - **ເວັບໄຊ:** https://csirtodx.gov.la
   - **ແຈ້ງເຫດສຸກເສີນທາງຄອມພິວເຕີ:** https://csirtodx.gov.la/incident
   - **ອີເມລ໌:** dtc@ou.gov.la, phoukham@ou.gov.la, kanchanh@ou.gov.la
   - **ເບີໂທ:** 081 312 508, 020 29 001100, 020 28 724 983

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຊາບ ແລະ ມີສະຕິລະວັງຕົວຕໍ່ການນຳໃຊ້ສື່ສັງຄົມອອນລາຍ, ຂໍ້ມູນຂ່າວສານ ຜ່ານອິນເຕີເນັດຕາມແຈ້ງການນີ້ດ້ວຍ.

**ຫົວໜ້າພະແນກ**

ພະແນກ ເຕັກໂນໂລຊີ ແລະ ການສື່ສານ

**ນ. ປິ່ນຄຳ ອຸ່ນລະຄອນ**